# ຍຸດທະສາດການເງິນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026–2030): ຄວາມເປັນມາ ແລະ ຈຸດປະສົງ

## ຄວາມເປັນມາ:

- ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP) 5 ປີ ຄັ້ງທີ X (2026–2030) ເປັນແຜນວຽກເພື່ອຊ່ວຍໃຫ້ ສປປ ລາວ ບັນລຸເປົ້າໝາຍການພັດທະນາແຫ່ງຊາດໃນໄລຍະຍາວ, ລວມທັງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC), ການເຕີບໂຕສີຂຽວ, ແລະ ການພັດທະນາແບບຍືນຍົງ.
- ການສ້າງຍຸດທະສາດການເງິນ (FS) ແມ່ນດໍາເນີນຄຽງຄູ່ກັບ ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026–2030) ເພື່ອຮັບປະກັນປະສິດທິພາບໃນການຈັດຕັ້ງປະຕິບັດຕົວຈິງ.
- ໂດຍອີງໃສ່ບົດຮຽນຈາກຍຸດທະສາດການເງິນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ຍຸດທະສາດການເງິນໃໝ່ນີ້ ມີເປົ້າໝາຍເພີ່ມທະວີການຄວາມສອດຄ່ອງລະຫວ່າງບູລິມະສິດຂອງການພັດທະນາ ແລະ ການສະໜອງທຶນທີ່ເປັນໄປໄດ້ຢ່າງແທ້ຈິງ.

## ຈຸດປະສົງຂອງຍຸດທະສາດການເງິນ:

1

**ເຊື່ອມໂຍງຄວາມຕ້ອງການດ້ານການເງິນກັບບູລິມະສິດການພັດທະນາແຫ່ງຊາດໃຫ້ມີຄວາມສອດຄ່ອງ**

ຮັບປະກັນການຈັດສັນການເງິນໃຫ້ສອດຄ່ອງກັບເປົ້າໝາຍທີ່ກໍານົດໄວ້ໃນແຜນການ 5 ປີ ຄັ້ງທີ X

2

**ກໍານົດ ແລະ ຂະຫຍາຍແຫຼ່ງທຶນໃຫ້ມີຄວາມຫຼາກຫຼາຍ**

ການເງິນພາກລັດ, ພາກເອກະຊົນ, ພາຍໃນ ແລະ ສາກົນ

3

**ສະເໜີມາດຕະການທີ່ສາມາດຈັດຕັ້ງປະຕິບັດໄດ້**

ສ້າງຄວາມເຂັ້ມແຂງການລະດົມທຶນພາຍໃນປະເທດ, ເພີ່ມປະສິດທິພາບການໃຊ້ຈ່າຍ, ແລະ ການເຂົ້າເຖິງແຫຼ່ງທຶນແບບຍືນຍົງ

4

**ຂອບການດໍາເນີນງານທີ່ເປັນລະບົບຊັດເຈນ**

ເພື່ອການປະສານງານ ແລະ ການປຶກສາຫາລືກັບຄູ່ຮ່ວມພັດທະນາ ແລະ ພາກເອກະຊົນ

# ຂະບວນການ, ຄວາມຄືບໜ້າ ແລະ ຂັ້ນຕອນຕໍ່ໄປ

## ຂະບວນການສ້າງຍຸດທະສາດການເງິນ:

- ໄດ້ມີທີມງານຊ່ຽວຊານສາກົນ ແລະ ພາຍໃນຮ່ວມສະໜັບສະໜູນການສ້າງແຜນ.
- ອີງໃສ່ຫຼັກການຂອງຂອບການເງິນແຫ່ງຊາດແບບເຊື່ອມສານ (INFF).
- ການປຶກສາຫາລືກັບຂະແໜງການກ່ຽວຂ້ອງ, ການຄິດໄລ່ຄ່າໃຊ້ຈ່າຍ, ການວິເຄາະເສດຖະກິດມະຫາພາກ-ການເງິນ ແລະ ການກຳນົດນະໂຍບາຍບູລິມະສິດ ແລະ ມາດຕະການຈັດຕັ້ງປະຕິບັດ.

## ຄວາມຄືບໜ້າ:

- **ແຜນການຄິດໄລ່ຄ່າໃຊ້ຈ່າຍ ແລະ ການວິເຄາະຊ່ອງຫວ່າງດ້ານການເງິນ** ແມ່ນກຳລັງດຳເນີນການ.
- **ກອງປະຊຸມປຶກສາຫາລື 2 ວັນ (ວັນທີ 15–16 ກໍລະກົດ ທີ່ ວັງວຽງ)** → 11 ກະຊວງ, LNCC, ສະມາຄົມ LAOSME, 8 ຫົວຂໍ້ປຶກສາຫາລື, ຮ່ວມເປັນປະທານໂດຍກົມແຜນການ (DOP), UNDP ແລະ ADB.
  ຫົວຂໍ້ສຳຄັນທີ່ໄດ້ປຶກສາຫາລື: → ການເງິນພາກລັດ, ODA, ໜີ້ສິນ, ການເງິນເອກະຊົນພາຍໃນ/ສາກົນ, MSME, ການເງິນສີຂຽວ/ການເງິນວຽກງານການປ່ຽນແປງດິນຟ້າອາກາດ, ຂະແໜງສັງຄົມ, ເຄື່ອງມືການຕິດຕາມ ແລະ ປະເມີນຜົນ (M&E).
- **ຄຳຄິດເຫັນຈາກຜູ້ເຂົ້າຮ່ວມ ຈະນຳໄປປະກອບເຂົ້າໃນ** → ການປັບປຸງສົມມຸດຖານ ແລະການກຳນົດທາງເລືອກບູລິມະສິດໃນການລະດົມທຶນ ລວມທັງເຄື່ອງມືດ້ານການເງິນແບບປະສົມ/ຮູບແບບໃໝ່ .

## ຂັ້ນຕອນຕໍ່ໄປ:

- ນຳເອົາຄຳຄິດເຫັນຈາກກອງປະຊຸມປຶກສາຫາລືປະກອບເຂົ້າໃນຮ່າງຍຸດທະສາດການເງິນ ລວມທັງແຜນການຄິດໄລ່ຄ່າໃຊ້ຈ່າຍ.
- ນຳສົ່ງຮ່າງຍຸດທະສາດການເງິນ ລວມທັງແຜນການຄິດໄລ່ຄ່າໃຊ້ຈ່າຍໃຫ້ພາກສ່ວນກ່ຽວຂ້ອງມີຄຳເຫັນ ກ່ອນກອງປະຊຸມໜ່ວຍງານຂະແໜງການເສດຖະກິດມະຫາພາກ ພາຍໃນທ້າຍໄຕມາດທີ 3/2025.
- ເຊື່ອມໂຍງຍຸດທະສາດການເງິນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ເອົາຕົວຊີ້ບອກດ້ານການເງິນເຂົ້າໃນຂອບການຕິດຕາມ ແລະ ປະເມີນຜົນຂອງ NSEDP.
- ປັບປຸງແຜນງານສຳລັບການຕິດຕາມ ແລະ ປະເມີນຜົນທີ່ມີປະສິດທິພາບ, ແລະ ຈັດກອງປະຊຸມປຶກສາຫາລື, ການຝຶກອົບຮົມ, ແລະ ການວາງແຜນການຈັດຕັ້ງປະຕິບັດ.
- ປັບປຸງເອກະສານຍຸດທະສາດການເງິນສະບັບສຸດທ້າຍໃຫ້ສຳເລັດໃນທ້າຍປີ 2025 ຄຽງຄູ່ກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ແລະ ກະກຽມນຳສະເໜີຕໍ່ນາຍົກລັດຖະມົນຕີພິຈາລະນາຮັບຮອງ ເພື່ອການສະໜັບສະໜູນລະດັບສູງພາຍໃນໄຕມາດທີ 1/2026